VIENTIANE CENTER
ວຽງຈັນເຊັ້ນເຕີ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ເລກທີ 039

ນະຄອນຫຼວງວຽງຈັນ, ວັນທີ 29 APR 2020

ແຈ້ງການ

ກ່ຽວກັບການສືບຕໍ່ປິດໃຫ້ບໍລິການຊົ່ວຄາວໃນບາງຫ້ອໜ່ວຍທຸລະກິດທີ່ຂຶ້ນກັບ

ບໍລິສັດວຽງຈັນເຊັ້ນເຕີລາວມະຫາຊົນ

- ອີງຕາມໜັງສືແຈ້ງການຂອງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມແລະແກ້ໄຂການລະບາດຂອງເຊື້ອຈຸລະໂລກສາຍພັນໃໝ່ Covid19 ສະບັບເລກທີ 002/ສພກ, ລົງວັນທີ 02 ມີນາ 2020;
- ອີງຕາມຄຳສັ່ງວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັກການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19 (Covid19) ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສະບັບເລກທີ 481/ຫສນຍ, ລົງວັນທີ 15 ເມສາ 2020;
- ອີງຕາມກອງປະຊຸມຮ່ວມລະຫວ່າງຄະນະອຳນວຍການ ແລະ ອີງຕາມການຊີ້ນຳຂອງປະທ່ານຄັ້ງວັນທີ 29 ເມສາ 2020.

ເນື່ອງຈາກໃນປະຈຸບັນນີ້ ສະພາບການແຜ່ລະບາດຂອງເຊື້ອຈຸລະໂລກສາຍພັນໃໝ່ Covid19 ຍັງສືບຕໍ່ເພີ່ມຂຶ້ນຢ່າງຕໍ່ເໜື່ອງ. ສຳລັບຢູ່ປະເທດລາວ ເຖິງວ່າລັດຖະບານໄດ້ມີມາດຕະການສະກັດກັ້ນ ແລະ ກັກການລະບາດພະຍາດນີ້ຢ່າງຈິງຈັງໃນໄລຍະຜ່ານມາ ຈຳນວນຄົນທີ່ໄດ້ກວດພົບການຕິດເຊື້ອກໍໄດ້ໜ້ອຍລົງ, ແຕ່ທາງລັດຖະບັນຍັງຮຽກຮ້ອງໃຫ້ສືບຕໍ່ປະຕິບັດຕາມຄຳສັ່ງຂອງ ນຍ ສະບັບເລກທີ06/ນຍ ຣອດວັນທີ 3 ພຶດສະພາ 2020. ສະນັ້ນ

ຜູ້ອຳນວຍການໃຫຍ່ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນໄດ້ຕົກລົງ:

1. ເຫັນດີໃຫ້ເຂດສູນການຄ້າຢຸດໃຫ້ບໍລິການຊົ່ວຄາວຂະຫຍາຍເວລາຈາກ ວັນທີ 29 ເມສາ 2020 ຣອດວັນທີ 3 ພຶດສະພາ 2020, ນອກຈາກຮ້ານທີ່ຕິດກັບຖະໜົນ ບາງແຫ່ງ, ເຊັ່ນ: ຮ້ານກະເຟ, ຮ້ານຊາໄຂ່ມຸກ ພາຍໃຕ້ເງື່ອນໄຂຮັບປະກັນຄວາມປອດໄພໃນການດຳເນີນທຸລະກິດ.

2. ສຳລັບເຂດຕຶກຫ້ອງການ, ແມ່ນເປີດບໍລິການປົກກະຕິໃຫ້ບັນດາບໍລິສັດທີ່ໄດ້ຕັ້ງສຳນັກງານຢູ່ໃນອາຄານຫ້ອງການ, ເພື່ອສະກັດກັ້ນການລະບາດ ໄດ້ຈັດຫ້ອງສະເພາະເພື່ອຕອນຮັບແຂກ ແລະ ບໍ່ອະນຸມັດແຂກພາຍນອກຂຶ້ນໄປຫ້ອງ ການໃນແຕ່ລະຊັ້ນ, ມີການກວດເຫັກອຸນຫະພຶມຮ່າງກາຍຂອງພະນັກງານ ພ້ອມມີການບັນທຶກໄວ້,

ສະໜອງເຈ່ວນ້ຳ ຢ້າຂ້າເຊື້ອໃຫ້ໃຊ້ຟຣີ, ເພີ່ມທະວີການສີດພົ້ນນ້ຳຢ້າຂ້າເຊື້ອໃນໂຊນສາທາລະນະ. ພ້ອມດຽວກັນ ນັ້ນ ຍັງມີການປັບປຸງເຕີ່ມອີກໂດຍປະຕິບັດຕາມມາດຕະການສະກັດກັ້ນ, ກັກການລະບາດ ເພື່ອຕ້ານພະຍາດໂຄ ວິດ 19 (Covid19).

3 ຄາດຫວາເຂດສູນການຄ້າຈະເລີ່ມເປີດໃຫ້ບໍລິການເປັນປົກກະຕິ ນັບແຕ່ວັນທີ 4 ພຶດສະພາ 2020, ຕາມ ເງື່ອນໄຂ ຂອງລັດທະບານທີ່ກຳນົດ ໃນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອຊາບ.

ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີລາວມະຫາຊົນ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company